ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ແຂວງ ໄຊຍະບູລີ

ເລກທີ 1169/ຈຂ.ຊຍ

ໄຊຍະບູລີ, ລົງວັນທີ 08.11.2018

# ຂໍ້ຕົກລົງ
# ວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງ ກອງທຶນພັດທະນາຂັ້ນບ້ານ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງ ທ້ອງຖິ່ນ ແຫ່ງ ສ ປ ປ ລາວ ສະບັບ ລົງວັນທີ 14 ທັນວາ 2015, ພາກ ທີ III, ໝວດທີ 4, ມາດຕາ 20 ວ່າດ້ວຍ ສິດ ແລະ ໜ້າທີ່ ຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ວຽງຈັນ.
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບລົງວັນທີ 12 ກໍລະກົດ 2012, ພາກທີ IV, ໝວດທີ 5, ມາດຕາ 77 ການສ້າງຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ.
- ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້, ເລກທີ 3933, ລົງວັນທີ 04 ກັນຍາ 2017, ວ່າດ້ວຍການ ຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ໄຊຍະບູລີ.
- ອີງຕາມ ມະຕິຂອງສະພາປະຊາຊົນແຂວງໄຊຍະບູລີ. ກ່ຽວກັບການຮັບຮອງເອົາ ຂໍ້ຕົກລົງ ວ່າດ້ວຍການ ສ້າງຕັ້ງ ແລະ ຄຸ້ມຄອງກອງທຶນພັດທະນາຂັ້ນບ້ານ ສະບັບເລກທີ 64/ສພຂ.ຊຍ ລົງວັນທີ 02 ຕຸລາ 2018.

ເຈົ້າແຂວງໄຊຍະບູລີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ວິທີການ, ມາດຕະການ ກ່ຽວກັບ ການສ້າງຕັ້ງ ແລະ ຄຸ້ມຄອງ ກອງທຶນ ພັດທະນາຂັ້ນບ້ານ. ເພື່ອໃຫ້ແຕ່ລະບ້ານມີກອງທຶນ, ປະຊາຊົນໄດ້ໃຊ້ບໍລິການ ໃນການຝາກອອມ ແລະ ການກູ້ຢືມ ເພື່ອຈັດຕັ້ງປະຕິບັດ ແຜນແກ້ໄຂຄວາມທຸກຍາກ, ແຜນການພັດທະນາບ້ານ, ມີໄດ້ຢ່າງ ສະດວກ, ການຄຸ້ມຄອງນຳໃຊ້ຢ່າງມີປະສິດທິຜົນ, ກອງທຶນມີຄວາມເຕີບໃຫຍ່ ແລະ ມີຄວາມຍືນຍົງ,

**ມາດຕາ 2 ຄາດໝາຍ.**

ໃຫ້ບ້ານທີ່ມີກອງທຶນພັດທະນາຕ່າງໆ ເປັນຕົ້ນແມ່ນ: ທຶນຊ່ວຍເຫຼືອລ້າ, ທຶນສະໜັບສະໜູນ ຈາກທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຢູ່ພາຍໃນບ້ານ ໃຫ້ມີຄະນະຮັບບໍລິຫານດຽວກັນ, ມີລະບຽບກອງທຶນພັດທະນາຂັ້ນບ້ານດຽວກັນ ແລະ ເຄື່ອນໄຫວພາຍໃຕ້ລະບຽບກອງທຶນພັດທະນາຂັ້ນ ບ້ານຢ່າງເຂັ້ມງວດ, ມີການຄຸ້ມຄອງທີ່ດີ, ກອງທຶນມີການຂະຫຍາຍຕົວ, ມີປະສິດທິຜົນ ແລະ ມີຄວາມ ຍືນຍົງ.

**ມາດຕາ 3 ການອະທິບາຍສັບ.**

1. **ກອງທຶນພັດທະນາຂັ້ນບ້ານ:** ແມ່ນກອງທຶນທີ່ ບັນດາຄອບຄົວພາຍໃນບ້ານ ທີ່ມີຄວາມຕື່ນຕົວສະມັກໃຈ ໂດຍບໍ່ຈຳແນກວ່າ ເປັນຄອບຄົວຮັ່ງມີ, ປານກາງ ຫຼື ທຸກຍາກຂາດເຂີນ ເຂົ້າເປັນສະມາຊິກ. ພ້ອມກັນ ທ້ອນໂຮມທຶນເຂົ້າກັນ, ໂດຍມີ ຄະນະບໍລິຫານ, ມີກົດລະບຽບ, ມີການລົງຫຸ້ນ, ມີການຝາກອອມ, ມີການ

ປ່ອຍເງິນໃຫ້ກູ້, ມີການປັນຜົນ, ຜູ້ເປັນສະມາຊິກກອງທຶນ ມີສິດໄດ້ກູ້ຢືມເງິນຈາກກອງທຶນ ໄປເຮັດການຜະລິດກະສິກຳ, ຫັດຖະກຳ, ປຸງແຕ່ງ, ອຸດສາຫະກຳ ຫຼື ບໍລິການ ອື່ນໆ ທີ່ມີຫຼັກສະນະສົ່ງເສີມ ການຜະລິດພາຍໃນບ້ານ ເຮັດໃຫ້ທຸກຄອບຄົວພາຍໃນບ້ານໄດ້ຢູ່ດີກິນດີ ແລະ ຫຼຸດພົ້ນຈາກຄວາມທຸກຍາກໄດ້ໄວ.

2. **ການອອມເງິນ:** ແມ່ນການນຳເງິນມາຝາກເຂົ້າບັນຊີເງິນຝາກກອງທຶນ ໃນແຕ່ລະເດືອນ.
3. **ການເຂົ້າຫຸ້ນ ຫຼື ການຝາກຫຸ້ນ:** ແມ່ນການການລົງທຶນຮ່ວມໃນກອງທຶນ ໃນໄລຍະກອງທຶນເຄື່ອນໄຫວ.
4. **ການຝາກເງິນ:** ແມ່ນການຝາກໄວ້ບໍ່ມີດອກເບ້ຍ ແລະ ການຝາກເພື່ອຮັບດອກເບ້ຍຕາມກຳນົດ.
5. **ການປັນຜົນ:** ແມ່ນການແບ່ງປັນຜົນ ກຳໄລ (ດອກເບ້ຍ) ຈາກການປ່ອຍເງິນໃຫ້ສະມາຊິກກູ້ຢືມ, ໃນໄລຍະດຳເນີນ ຫຼື ເຄື່ອນໄຫວວຽກງານກອງທຶນ ໃນ ຮອບ 6ເດືອນ ຫຼື 1 ປີ ໃຫ້ສະມາຊິກ ຕາມຄະແນນຂອງເງິນຝາກອອມສະສົມ ໃນຮອບການປັນຜົນ.
6. ໄພພິບັດ: ໝາຍເຖິງໄພອັນຕະລາຍເກີດຈາກທຳມະຊາດ ແລະ ການກະທຳຂອງ ມະນຸດ ເຊັ່ນ: ລົມພະຍຸພັດ, ໜາກເຫັບຕົກ, ຟ້າຜ່າ, ນ້ຳຖ້ວມ, ໄພແຫ້ງແລ້ງ, ອາກາດໜາວ, ດິນເຈື່ອນ, ແຜ່ນດິນໄຫວ, ໄຟໄໝ້, ພູເຂົາໄຟລະເບີດ ສັດຕູພືດ, ພະຍາດລະບາດ, ຊຶ່ງໄດ້ເກີດຂຶ້ນ ແລະ ສ້າງຄວາມເສຍຫາຍ ຕໍ່ຊີວິດ, ຊັບສິນ, ເສດຖະກິດ ແລະ ສິ່ງແວດລ້ອມ.

ມາດຕາ 4 ຂອບເຂດການນຳໃຊ້.

ທຸກໆກອງທຶນ ທີ່ມີການເຄື່ອນໄຫວ ຢູ່ພາຍໃນບ້ານ, ບຸກຄົນ, ນິຕິບຸກຄົນ ແລະ ທຸກການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກ່ຽວຂ້ອງ ວຽກງານກອງທຶນພັດທະນາຂັ້ນບ້ານ ຢູ່ໃນຂອບເຂດທົ່ວແຂວງໄຊຍະບູລີ.

## ໝວດທີ 2
## ຫຼັກການ ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງກອງທຶນ ພັດທະນາຂັ້ນບ້ານ

ມາດຕາ 5 ກອງທຶນພັດທະນາຂັ້ນບ້ານ ຈັດຕັ້ງຂຶ້ນຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ, ຕິດພັນກັບແຜນຍຸດທະສາດການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.
2. ອົງການປົກຄອງບ້ານ ແລະ ປະຊາຊົນພາຍໃນບ້ານ ມີຄວາມຮັບຮູ້, ເຂົ້າໃຈ ແລະ ເປັນເອກະພາບ.
3. ມີກົດລະບຽບ, ມີການຈັດຕັ້ງຄະນະບໍລິຫານ ກອງທຶນດຽວຢູ່ພາຍໃນບ້ານ. ມີການແບ່ງຄວາມຮັບຜິດຊອບພາຍໃນຄະນະຢ່າງລະອຽດຄົບຖ້ວນ.
4. ມີລະບົບບັນຊີຢ່າງຈະແຈ້ງ ໂປ່ງໃສ ສາມາດກວດສອບໄດ້.
5. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ເປັນເອກະພາບ.
6. ເສີມຂະຫຍາຍພູມປັນຍາ, ຄວາມດຸໝັ່ນຂະຫຍັນພຽນ ແລະ ຫົວຄິດປະດິດສ້າງ ຂອງປະຊາຊົນພາຍໃນບ້ານ.ເພື່ອມີໂອກາດຮຽນຮູ້, ການນຳໃຊ້ເຕັກນິກວິທະຍາສາດໃໝ່ ເຂົ້າສູ່ການຜະລິດ.
7. ປະຊາຊົນມີຄວາມສາມັກຄີ ແລະ ພ້ອມໃຈກັນຈັດຕັ້ງປະຕິບັດ, ພັດທະນາກອງທຶນພັດທະນາຂັ້ນບ້ານ ມີການສະສົມທຶນຮອນ ເຂົ້າກອງທຶນພັດທະນາຂັ້ນບ້ານ ໃຫ້ນັບມື້ ນັບເຕີບໃຫຍ່ ເຂັ້ມແຂງ, ປຸກລະດົມໃຫ້ມີການຝາກ. ສາມາດປ່ອຍເງິນກູ້ໃຫ້ສະມາຊິກກູ້ຢືມຕາມກຳນົດເວລາ ທີ່ກຳນົດໄວ້ໃນລະບຽບ, ມີການແບ່ງປັນຜົນກຳໄລ.

ມາດຕາ 6 ຂັ້ນຕອນການສ້າງຕັ້ງ ແລະ ວິທີການສ້າງຕັ້ງ

1. ຂັ້ນຕອນໂຄສະນາ ເຜີຍແຜ່:

1.1. ຊອກເປົ້າໝາຍບຸກຄະລະກອນທີ່ມີຄວາມສາມາດໃນການໂຄສະນາຂົນຂວາຍປະຊາຊົນເຂົ້າເປັນສະມາຊິກ.

1.2. ຊອກຫາຜູ້ສະໜັບສະໜູນຫຼັກ ໂດຍແນ່ໃສ່ຄະນະພັກ, ອົງການປົກຄອງບ້ານ ແລະ ຜູ້ຊົງຄຸນວຸດທິຂອງບ້ານ.

1.3. ຈັດຕັ້ງການຝຶກອົບຮົມເປົ້າໝາຍ ໂດຍສະເພາະຄະນະບ້ານ ຫົວໜ້າໜ່ວຍ ແລະ ກຸ່ມເປົ້າໝາຍ.

1.4. ຄົ້ນຄວ້າ ແລະ ຮັບຮອງເອົາຮ່າງກົດລະບຽບຂອງກອງທຶນ.

1.5. ເກັບກຳຂໍ້ມູນ ເພື່ອຊອກຮູ້ທ່າແຮງໃນການສ້າງຕັ້ງ ແລະ ເຄື່ອນໄຫວ ກອງທຶນໃຫ້ຍືນຍົງ.

1.6. ພາຍຫຼັງ ຄະນະພັກ, ອົງການປົກຄອງບ້ານ ເຫັນດີຕົກລົງເປັນເອກະພາບແລ້ວ, ນາຍບ້ານສະເໜີ ຂໍອານຸມັດສ້າງຕັ້ງຈາກເຈົ້າເມືອງ.

2. ຂັ້ນຕອນການສ້າງຕັ້ງກອງທຶນ: (ພາຍຫຼັງໄດ້ຮັບຂໍ້ຕົກລົງອານຸມັດແລ້ວ)

1.

2.

2.1. ເຕົ້າໂຮມປະຊາຊົນພາຍໃນບ້ານ ທັງໝົດ ເພື່ອດຳເນີນກອງປະຊຸມ.

2.2. ແຈ້ງຈຸດປະສົງຂອງ ການເຕົ້າໂຮມ ຕໍ່ກອງປະຊຸມ.

2.3. ແຈ້ງຊີ້ ປະກາດຂໍ້ຕົກລົງ ແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງກອງທຶນຂັ້ນເມືອງ.

2.4. ຄະນະກຳມະການຄຸ້ມຄອງກອງທຶນຂັ້ນເມືອງ ມີຄວາມເຫັນ ກ່ຽວກັບ ຄວາມໝາຍ, ຄວາມສຳຄັນ, ຄວາມຈຳເປັນໃນການສ້າງຕັ້ງກອງທຶນ ພັດທະນາຂັ້ນບ້ານ. ຕໍ່ກອງປະຊຸມ (ຂໍຄວາມເຫັນໃນກອງປະຊຸມ).

2.5. ຜ່ານ ຮ່າງກົດລະບຽບ ຂອງກອງທຶນພັດທະນາຂັ້ນບ້ານ ຕໍ່ກອງປະຊຸມ ປະຊາຊົນໝົດບ້ານຮັບຮອງ.

2.6. ຜ່ານ ຂໍ້ຕົກລົງ ຂອງ ທ່ານເຈົ້າເມືອງ ວ່າດ້ວຍການອານຸມັດສ້າງຕັ້ງກອງທຶນ ພັດທະນາບ້ານ.

2.7. ຜ່ານຂໍ້ຕົກລົງແຕ່ງຕັ້ງຄະນະບໍລິຫານກອງທຶນພັດທະນາຂັ້ນບ້ານ.

2.8. ຈັດພິທີ ດຳເນີນການຮັບເອົາສະມາຊິກ, ຮັບເງິນຝາກຂອງສະມາຊິກ.

2.9. ສະຫຼຸບສັງລວມ ການຮັບເອົາສະມາຊິກ, ສະຫຼຸບບັນຊີ .

2.10.ດຳເນີນການປ່ອຍເງິນໃຫ້ສະມາຊິກກູ້ຢືມ.

2.11.ຄະນະກຳມະການຄຸ້ມຄອງກອງທຶນພັດທະນາ ຂັ້ນເມືອງ ມີຄວາມເຫັນແນະນຳ ຕໍ່ ຄະນະບໍລິຫານກອງທຶນພັດທະນາຂັ້ນບ້ານ ແລະ ປະຊາຊົນ.

ມາດຕາ 7 ການເຄື່ອນໄຫວ ຂອງກອງທຶນພັດທະນາຂັ້ນບ້ານ

ກອງທຶນພັດທະນາຂັ້ນບ້ານ ເຄື່ອນໄຫວ ພາຍໃຕ້ຂໍ້ຕົກລົງສະບັບນີ້ ແລະ ກົດລະບຽບຂອງກອງທຶນພັດທະນາບ້ານຂັ້ນ ແລະ ຕ້ອງຜ່ານການຈົດທະບຽນສານ.

## ໝວດທີ 3

## ແຫຼ່ງລາຍຮັບ, ການກຳນົດອັດຕາດອກເບ້ຍ, ເປົ້າໝາຍການນຳໃຊ້ ແລະ ການແບ່ງປັນຜົນ

ມາດຕາ 8 ແຫຼ່ງລາຍຮັບຂອງກອງທຶນ

1. ເງິນເຂົ້າຫຸ້ນປະຈຳຂອງສະມາຊິກ.
2. ເງິນຝາກອອມຂອງສະມາຊິກ.
3. ເງິນຝາກອອມຂອງການຈັດຕັ້ງພາຍໃນບ້ານ.
4. ເງິນຝາກຂອງລັດ, ຈາກໂຄງການ ແລະ ຈາກພາກສ່ວນອື່ນ ໃນຮູບແບບສະມາຊິກໜຶ່ງ.
5. ເງິນສົມທົບ ຂອງລັດ, ຂອງໂຄງການ, ຂອງພາກສ່ວນອື່ນ ໃນຮູບແບບຊ່ວຍເຫຼືອລ້າ.
6. ເງິນດອກເບ້ຍ ທີ່ໄດ້ຈາກການປ່ອຍເງິນກູ້ໃຫ້ສະມາຊິກ.
7. ເງິນດອກເບ້ຍ ໄດ້ຈາກການຝາກເງິນໄວ້ກັບທະນາຄານ.
8. ເງິນຄ່າທຳນຽມ.
9. ເງິນປັບໃໝຈາກສະມາຊິກທີ່ເຄື່ອນໄຫວຜິດລະບຽບຂອງກອງທຶນ.

ມາດຕາ 9 ເປົ້າໝາຍການນຳໃຊ້ກອງທຶນ

1. ປ່ອຍເງິນກູ້ໃຫ້ສະມາຊິກໄປດຳເນີນການຜະລິດ, ເຮັດການບໍລິການ, ຕາມແຜນຂອງຄອບຄົວ.

2. ປ່ອຍເງິນກູ້ເພື່ອແກ້ໄຂບັນຫາຂໍ້ຫຍຸ້ງຍາກພາຍໃນຄອບຄົວ.
3. ການປະຊຸມວຽກງານກອງທຶນ (ສະເພາະເງິນປັນຜົນ ຕາມລະບຽບ).
4. ການບໍລິຫານວຽກງານກອງທຶນ (ສະເພາະເງິນປັນຜົນ ຕາມລະບຽບ).
5. ການພັດທະນາບ້ານ (ສະເພາະເງິນປັນຜົນ ຕາມລະບຽບ).

**ມາດຕາ 10 ເງື່ອນໄຂຜູ້ກູ້ຢືມ.**

1. ຕ້ອງມີສໍາມະໂນຄົວຂຶ້ນກັບບ້ານ ກອງທຶນຕັ້ງຢູ່, ເປັນສະມາຊິກກອງທຶນພັດທະນາຂັ້ນບ້ານ ແຕ່ 3 ເດືອນຂຶ້ນໄປ (ລະອຽດແມ່ນກໍານົດໄວ້ໃນລະບຽບກອງທຶນພັດທະນາຂັ້ນບ້ານສະເພາະ).
2. ຄອບຄົວທຸກຍາກ ທີ່ບໍ່ເປັນສະມາຊິກ ສາມາດກູ້ຢືມໄດ້ ສະເພາະແຫຼ່ງທຶນສົມທົບທີ່ໄດ້ລະບຸເປົ້າໝາຍ ແລະ ຕ້ອງຜ່ານລະບົບບັນຊີຂອງກອງທຶນພັດທະນາຂັ້ນບ້ານ.

**ມາດຕາ 11 ກໍານົດການປ່ອຍເງິນໃຫ້ກູ້.**

ເງິນກອງທຶນພັດທະນາຂັ້ນບ້ານ ອາດມີຫຼາຍແຫຼ່ງທຶນ, ດັ່ງນັ້ນ ການປ່ອຍເງິນກູ້ ແມ່ນປະຕິບັດຕາມນະໂຍບາຍຂອງແຕ່ລະແຫຼ່ງທຶນ ດັ່ງນີ້:

ສະເພາະແຫຼ່ງເງິນຝາກອອມ ຫຼື ລົງຫຸ້ນ ຂອງສະມາຊິກ, ຂອງການຈັດຕັ້ງຕ່າງໆ, ຈໍານວນ ປ່ອຍເງິນກູ້ສູງສຸດ ບໍ່ໃຫ້ເກີນ 5 ເທົ່າຕົວ ຂອງເງິນຝາກ ສະມາຊິກຜູ້ສະເໜີກູ້ຢືມ ໃນເວລາສະເໜີກູ້ຢືມ, ໂດຍມີສະມາຊິກຄ້ອຍກັນ 2 ທ່ານ ທີ່ບໍ່ຢູ່ໃນຄອບຄົວດຽວກັນ ຮັບຮູ້ ແລະ ຄໍ້າປະກັນ, ສະມາຊິກຜູ້ໜຶ່ງສາມາດຮັບຮູ້ ແລະ ຄໍ້າປະກັນໄດ້ 1 ສັນຍາເທົ່ານັ້ນ, ກໍລະນີສະມາຊິກ ຫາກມີຄວາມຈໍາເປັນຕ້ອງການຢືມເປັນຈໍານວນຫຼາຍຕ້ອງມີຫຼັກຊັບຄໍ້າປະກັນ (ຫຼັກຊັບທີ່ໃຫ້ໃຊ້ ໄດ້ແຕ່ສະເພາະແຕ່ປະເພດທີ່ດິນເທົ່ານັ້ນ) ໂດຍກໍານົດໃຫ້ກູ້ຢືມສູງສຸດບໍ່ເກີນເຄິ່ງໜຶ່ງຂອງມູນຄ່າຫຼັກຊັບ. ກໍານົດ ເວລາການກູ້ຢືມ ບໍ່ເກີນ 1 ປີ.

ສະເພາະ ແຫຼ່ງທຶນສົມທົບ ຈາກລັດ, ຈາກໂຄງການຊ່ວຍເຫຼືອ ທີ່ມີນະໂຍບາຍສະເພາະ ແມ່ນໃຫ້ປະຕິ ບັດຕາມນະໂຍບາຍກໍານົດໄວ້ ແຕ່ຕ້ອງຜ່ານບັນຊີຂອງກອງທຶນພັດທະນາຂັ້ນບ້ານ, ທັ້ງນີ້ ກໍ່ເພື່ອຫຼີກລ້ຽງບັນຫາ ສະມາຊິກໜຶ່ງ ກູ້ຢືມຫຼາຍແຫຼ່ງທຶນ.

ມາດຕາ 12 ການກໍານົດອັດຕາດອກເບ້ຍເງິນກູ້.

ເງິນກອງທຶນພັດທະນາຂັ້ນບ້ານ ອາດມີຫຼາຍແຫຼ່ງທຶນ, ດັ່ງນັ້ນ ອັດດອກເບ້ຍການປ່ອຍເງິນກູ້ ແມ່ນປະຕິບັດຕາມນະໂຍບາຍຂອງແຕ່ລະແຫຼ່ງທຶນ ດັ່ງນີ້:

ອັດຕາດອກເບ້ຍເງິນປ່ອຍກູ້ ສະເພາະແຫຼ່ງເງິນຝາກອອມ ຫຼື ລົງຫຸ້ນ ຂອງສະມາຊິກ, ຂອງການຈັດຕັ້ງຕ່າງໆ, ໃຫ້ມີຄວາມ ເໝາະສົມໃນແຕ່ລະໄລຍະ ແລະ ບໍ່ໃຫ້ເກີນ 2% ຕໍ່ເດືອນ. ທັ້ງນີ້ເພື່ອໃຫ້ໄດ້ຮັບຜົນປະໂຫຍດ, ກອງທຶນສາມາດດໍາເນີນການໄປໄດ້, ມີຄວາມຍຸຕິທໍາ ແລະ ມີຄວາມຍືນຍົງ,

ອັດຕາດອກເບັ້ຍເງິນກູ້ ສະເພາະ ແຫຼ່ງທຶນສົມທົບ ຈາກລັດ, ຈາກໂຄງການຊ່ວຍເຫຼືອ ທີ່ມີນະໂຍບາຍສະເພາະ ແມ່ນໃຫ້ປະຕິບັດຕາມນະໂຍບາຍກໍານົດໄວ້ ແຕ່ຕ້ອງຜ່ານບັນຊີຂອງກອງທຶນພັດທະນາຂັ້ນບ້ານ,

**ມາດຕາ 13 ການແບ່ງປັນຜົນ.**

ການແບ່ງປັນຜົນກໍາໄລ ຈາກການເຄື່ອນໄຫວກອງທຶນ ຕ້ອງໄດ້ມີການແບ່ງປັນຜົນ ຊ້າສຸດບໍ່ໃຫ້ເກີນ 1 ປີ ແລະ ໃນໜຶ່ງປີ ສາມາດແບ່ງປັນຜົນໄດ້ຫຼາຍຄັ້ງ ຕາມຄວາມເໝາະສົມ. ການແບ່ງປັນຜົນ ໃຫ້ປະຕິບັດດັ່ງນີ້.

1. 70% ຂອງຜົນກໍາໄລສຸດທິ ແມ່ນຄິດໄລ່ປັນຜົນໃຫ້ສະມະຊິກຕາມຄະແນນເງິນຝາກໃນມື້ປັນຜົນແຕ່ລະຄັ້ງ.
2. 30% ຂອງກໍາໄລສຸດທິ ແມ່ນແບ່ງປັນດັ່ງນີ້:

2.1. 5% ເປັນຄັງສະສົມຂອງກອງທຶນ: ຄັງສະສົມແມ່ນ ແມ່ນຄັງທີ່ຫັກໄວ້ເພື່ອແກ້ໄຂວຽກງານບໍລິຫານຂອງກອງທຶນເປັນຕົ້ນແມ່ນ: ການຈັດກອງປະຊຸມປະຈຳປີ, ກອງປະຊຸມວິສາມັນຕ່າງໆ, ຊື້ ອຸປະກອນ, ຄອມພິວເຕີ,ຈັກຄິດໄລ່, ປຶ້ມຂຽນ, ສິ່ງອຳນວຍຄວາມສະດວກພາຍໃນຫ້ອງການຂອງກອງທຶນ. ຈ່າຍເຂົ້າໃນການບໍລິຫານ ການເຄື່ອນໄຫວວຽກງານ ຂອງຄະນະບໍລິຫານກອງທຶນໄປຮ່ວມກອງປະຊຸມຢູ່ພາຍນອກ, ຈ່າຍຝຶກອົບຮົມ ແລະ ອື່ນໆທີ່ຈຳເປັນ. ທີ່ເກີດຂຶ້ນໂດຍບໍ່ມີແຜນການລ່ວງໜ້າ, ເງິນດັ່ງກ່າວຕ້ອງສະສົມໃຫ້ມີຈຳນວນເພີ່ມຂຶ້ນ ແລະ ສາມາດໂອນໄປເປັນທຶນສະສົມ ເພື່ອໄປເປັນທຶນໃນການຈົດທະບຽນ ເປັນສະຖາບັນການເງິນຈຸລະພາກໃນຮູບແບບໃດໜຶ່ງໄດ້. ການຄຸ້ມຄອງແມ່ນຮັກສາໄວ້ແບບເປັນເງິນຝາກໄວ້ນຳກອງທຶນພັດທະນາບ້ານ ໃນຖານະເປັນສະມາຊິກໜຶ່ງ.

2.2. 5% ເປັນຄັງແຮ: ເພື່ອຄ້ຳປະກັນຄວາມສ່ຽງຂອງກອງທຶນ ເປັນຕົ້ນແມ່ນ: ການຄ້ຳປະກັນໜີ້ສູນເສຍໄປນຳສະມາຊິກແບບບັງເອີນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ, ເຮັດໃຫ້ສູນເສຍຊັບສິນ, ເສດຖະກິດ ແລະ ເສຍຊີວິດ ທີ່ບໍ່ສາມາດໃຊ້ແທນໄດ້, ເງິນດັ່ງກ່າວຕ້ອງສະສົມໃຫ້ມີຈຳນວນເພີ່ມຂຶ້ນ ແລະ ສາມາດເອົາໄປເປັນທຶນໃນການຈົດທະບຽນ ເປັນສະຖາບັນການເງິນຈຸລະພາກໃນຮູບແບບໃດໜຶ່ງໄດ້. ການຄຸ້ມຄອງແມ່ນໃຫ້ຝາກໄວ້ກັບກອງທຶນພັດທະນາບ້ານ ໃນຖານະເປັນສະມາຊິກໜຶ່ງ.

2.3. 5% ເປັນຄັງພັດທະນາບ້ານແມ່ນມອບເຂົ້າຄັງພັດທະນາບ້ານຕາມລະບຽບ. ເພື່ອສົມທົບກັບຄັງພັດທະນາທີ່ໄດ້ຈາກຮ່ອງອື່ນ ເພື່ອນຳໃຊ້ເຂົ້າໃນການ ປະຕິບັດແຜນພັດທະນາບ້ານ ເປັນຕົ້ນການພັດທະນາພື້ນຖານໂຄງລ່າງອື່ນໆ. ການຄຸ້ມຄອງແມ່ນໃຫ້ຝາກໄວ້ກັບກອງທຶນ ໃນຖານະເປັນສະມາຊິກໜຶ່ງ.

2.4. 13% ເປັນຄ່າຕອບແທນແຮງງານຂອງຄະນະຮັບຜິດຊອບກອງທຶນຂັ້ນບ້ານ (ຄະນະບໍລິຫານກອງທຶນ, ຄະນະກວດກາກອງທຶນ) ທີ່ໄດ້ເຮັດວຽກບໍລິຫານງານກອງທຶນໃນແຕ່ລະເດືອນ.

2.5. 2% ມອບເປັນພັນທະໃຫ້ ເມືອງ ເພື່ອນຳໃຊ້ ເຂົ້າໃນວຽກງານ ຄຸ້ມຄອງ ແລະ ພັດທະນາກອງທຶນ ໂດຍແບ່ງດັ່ງນີ້:

   2.5.1. 40% ເປັນເງິນລົງ ຕິດຕາມ, ກວດກາ, ຊຸກຍູ້ການເຄື່ອນໄຫວກອງທຶນຂັ້ນບ້ານ ໃນແຕ່ລະເດືອນ , ແຕ່ລະບ້ານ ພາຍໃນເມືອງ ຢ່າງເປັນປົກກະຕິ.

   2.5.2. 20% ເປັນເງິນ ສະສົມໄວ້ ດຳເນີນກອງປະຊຸມປະຈຳປີວຽກງານກອງທຶນທົ່ວເມືອງ, ເຂົ້າຮ່ວມກອງ ປະຊຸມ ຂັ້ນແຂວງ.

   2.5.3. 20% ເປັນເງິນສະສົມໄວ້ ເພື່ອດຳເນີນການຝຶກອົບຮົມໃຫ້ວິຊາການຂັ້ນເມືອງ ແລະ ຄະນະຮັບຜິດຊອບກອງທຶນຂັ້ນບ້ານ.

   2.5.4. 20% ເປັນທຶນສົມທົບສ້າງຕັ້ງກອງທຶນພັດທະນາບ້ານທີ່ສ້າງຕັ້ງໃໝ່ ແລະ ສົມທົບການພັດທະນາພາຍໃນເມືອງ, ໂດຍມີຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (ໜ່ວຍງານພັດທະນາຊົນນະບົດ ແລະ ສະຫະກອນ)ເປັນຜູ້ຕິດຕາມ, ເງິນຮ່ອງດັ່ງກ່າວແມ່ນໃຫ້ຝາກໄວ້ຄັງເງິນຂອງເມືອງ ຫຼື ທະນາຄານ ທີ່ມີຢູ່ພາຍໃນເມືອງ, ການໃຊ້ຈ່າຍຕ້ອງໄດ້ຮັບການເຫັນດີ ຈາກຄະນະກຳມະການຄຸ້ມຄອງກອງທຶນຂັ້ນເມືອງ.

## ໝວດທີ 4
## ລະບົບບັນຊີຂອງກອງທຶນ

ມາດຕາ 14 ລະບົບບັນຊີ ຂອງກອງທຶນພັດທະນາຂັ້ນບ້ານ ປະກອບດ້ວຍບາງບັນຊີທີ່ມີຄວາມຈຳເປັນດັ່ງນີ້:

1. ປຶ້ມຕິດຕາມປະຈຳຕົວຂອງສະມາຊິກ
2. ບັນຊີຕິດຕາມຝາກເງິນປະຈຳເດືອນ ແລະ ການຄິດໄລ່ຄະແນນ ປະຈຳປີ ຂອງສະມາຊິກ
3. ບັນຊີຕິດຕາມລາຍຮັບ-ລາຍຈ່າຍ ເງິນສົດ ປະຈຳວັນຂອງກອງທຶນພັດທະນາຂັ້ນບ້ານ

4. ບັນຊີຕິດຕາມ ການຝາກ-ຖອນທະນາຄານ ຂອງກອງທຶນພັດທະນາຂັ້ນບ້ານ ປະຈຳເດືອນ
5. ບັນຊີຕິດຕາມການກູ້ເງິນ ແລະ ສົ່ງດອກເບ້ຍ ຂອງສະມາຊິກກອງທຶນພັດທະນາຂັ້ນບ້ານ.
6. ບັນຊີລວມ ແລະ ແຍກປະເພດ
7. ລາຍການດຳເນີນງານ ຂອງກອງທຶນພັດທະນາຂັ້ນບ້ານປະຈຳເດືອນ ແລະ ສະຫຼຸບຖານະການເງິນ(ດຸ່ນດ່ຽງ) ຂອງກອງທຶນພັດທະນາຂັ້ນບ້ານປະຈຳເດືອນ
8. ໃບລາຍງານປະຈຳເດືອນ

**ມາດຕາ 15 ການຄຸ້ມຄອງ ເງິນກອງທຶນ:**

ເງິນກອງທຶນທັງໝົດ ທີ່ຍັງເຫຼືອຈາກການປ່ອຍກູ້ໃຫ້ສະມາຊິກ ຕາມລະບຽບແລ້ວ, ແມ່ນໃຫ້ຮັກສາໄວ້ ຄັງເງິນສົດບໍ່ໃຫ້ເກີນ 1.000.000 ກີບ, ສ່ວນທີ່ເຫຼືອຕ້ອງນຳໄປຝາກໄວ້ທະນາຄານ ຕາມບັນຊີທີ່ເປີດໄວ້.

## ໝວດທີ 5
## ການຄຸ້ມຄອງກອງທຶນພັດທະນາຂັ້ນບ້ານ.

ມາດຕາ 16: ກອງທຶນພັດທະນາຂັ້ນບ້ານ ຂຶ້ນກັບ ຄະນະກຳມະການ ຄຸ້ມຄອງກອງທຶນ ຂັ້ນເມືອງ, ໂດຍມີ ໜ່ວຍງານ ພັດທະນາຊົນນະບົດ ແລະ ສະຫະກອນ (ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ) ເປັນຫ້ອງການສັງລວມ, ຢູ່ຂັ້ນແຂວງ ມີ ຄະນະກຳມະການຄຸ້ມຄອງກອງທຶນ ຂັ້ນແຂວງ. ໂດຍມີ ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ (ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ) ເປັນຫ້ອງການສັງລວມ.

**ມາດຕາ 17 ຄະນະກຳມະການ ຄຸ້ມຄອງກອງທຶນ ຂັ້ນແຂວງປະກອບດ້ວຍ**

| | | |
|---|---|---|
| 1. | ຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານກະສິກຳ ແລະ ປ່າໄມ້ | ເປັນປະທານ |
| 2. | ຫົວໜ້າ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ | ເປັນຮອງ |
| 3. | ຮອງ ຫົວໜ້າພະແນກ ການເງິນແຂວງ | ເປັນກຳມະການ |
| 4. | ຮອງ ຫົວໜ້າຫ້ອງວ່າການ ແຂວງ | ເປັນກຳມະການ |
| 5. | ຮອງ ຫົວໜ້າພະແນກ ແຜນການ ແລະ ການລົງທຶນ ແຂວງ | ເປັນກຳມະການ |
| 6. | ຮອງ ຫົວໜ້າພະແນກ ກວດກາລັດ ຂັ້ນ ແຂວງ | ເປັນກຳມະການ |
| 7. | ຮອງ ຫົວໜ້າພະແນກ ຍຸຕິທຳ ແຂວງ | ເປັນກຳມະການ |
| 8. | ຮອງ ປະທານສະຫະພັນແມ່ຍິງ ແຂວງ | ເປັນກຳມະການ |
| 9. | ຮອງ ຫົວໜ້າ ພະແນກ, ອົງການ ຂັ້ນແຂວງ (ທີ່ມີທຶນສະໜັບສະໜູນກອງທຶນ) | ເປັນກຳມະການ |
| 10. | ຮອງ ເຈົ້າເມືອງ | ເປັນກຳມະການ |
| 11. | ຮອງ ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ແຂວງ | ເປັນກຳມະການ |
| 12. | ຜູ້ຕາງໜ້າ ທະນາຄານ ນະໂຍບາຍ | ເປັນກຳມະການ |

**ມາດຕາ 18 ໜ້າທີ່ ຄະນະກຳມະການຄຸ້ມຄອງກອງທຶນຂັ້ນແຂວງມີດັ່ງນີ້:**

1. ເປັນເສນາທິການ ໃຫ້ແກ່ ທ່ານເຈົ້າແຂວງ ກ່ຽວກັບວຽກງານ ຄຸ້ມຄອງ, ການຕິດຕາມການຈັດຕັ້ງປະຕິບັດວຽກງານຂອງກອງທຶນພັດທະນາຂັ້ນບ້ານ.
2. ປຸກລະດົມ, ໂຄສະນາຊວນເຊື່ອຕໍ່ທຸກພາກສ່ວນ ເພື່ອເຂົ້າມາມີສ່ວນຮ່ວມສະໜັບສະໜູນທຶນປະກອບເຂົ້າໃນກອງທຶນພັດທະນາຂັ້ນບ້ານ./.

3. ຈັດກອງປະຊຸມ ສະຫຼຸບການຈັດຕັ້ງປະຕິບັດວຽກງານ ກອງທຶນປະຈຳປີ, ຄົ້ນຄວ້າພິຈາລະນາ ຮັບຮອງເອົາແຜນການເຄື່ອນໄຫວຂອງຄະນະກຳມະການ, ບົດຮຽນໃນການຄຸ້ມຄອງກອງທຶນພັດທະນາບ້ານ ເພື່ອສືບຕໍ່ນຳພາ ກອງທຶນພັດທະນາ ໃຫ້ເຂັ້ມແຂງຂຶ້ນ ລາຍງານຕໍ່ເຈົ້າແຂວງ.
4. ລົງຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດ ວຽກງານກອງທຶນຢູ່ ເມືອງ ແລະ ບ້ານ.
5. ສົມທົບກັບອົງການປົກຄອງເມືອງ, ອົງການປົກຄອງບ້ານ ເພື່ອປັບປຸງກອງທຶນພັດທະນາຂັ້ນບ້ານໃຫ້ມີຄວາມເຂັ້ມແຂງ.
6. ຊີ້ນຳ ແລະ ຕິດຕາມ, ກວດກາ ການປະຕິບັດວຽກງານຂອງກອງເລຂາ, ຄະນະຮັບຜິດຊອບຄຸ້ມຄອງກອງທຶນຂັ້ນເມືອງ, ຄະນະຮັບຜິດຊອບກອງທຶນພັດທະນາຂັ້ນບ້ານ .
7. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 19 ກອງເລຂາ ຂອງຄະນະກຳມະການຄຸ້ມຄອງກອງທຶນຂັ້ນແຂວງ ປະກອບມີ:**

| | | |
|---|---|---|
| 1. | ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ | ເປັນຫົວໜ້າ |
| 2. | ຫົວໜ້າຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ | ເປັນຮອງ |
| 3. | ຫົວໜ້າຂະແໜງກວດກາລັດ | ເປັນຄະນະ |
| 4. | ຮອງຫົວໜ້າຂະແໜງ ຜູ້ຮັບຜິດຊອບວຽກສະຫະກອນ ແລະ ກອງທຶນ | ເປັນຄະນະ |
| 5. | ຜູ້ຮັບຜິດຊອບວຽກງານກອງທຶນພັດທະນາ | ເປັນຄະນະ, ເປັນຜູ້ສັງລວມວຽກ |

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງກອງເລຂາ.**

1. ສັງລວມສະພາບການຈັດຕັ້ງປະຕິບັດວຽກງານກອງທຶນພັດທະນາຂັ້ນບ້ານ ໃນຂອບເຂດທົ່ວແຂວງລາຍງານໃຫ້ຄະນະກຳມະການ ຄຸ້ມຄອງຂັ້ນແຂວງໃນແຕ່ລະເດືອນ, ຮ່າງເອກະສານ, ບົດລາຍງານ, ແຜນການ, ແຜນເຄື່ອນໄຫວ ໃຫ້ຄະນະກຳມະການ ຄຸ້ມຄອງ ກອງທຶນຂັ້ນແຂວງ.
2. ເປັນໃຈກາງໃນການປະສານງານ ຂອງບັນດາ ທ່ານຄະນະກຳມະການຄຸ້ມຄອງກອງທຶນຂັ້ນແຂວງ.
3. ກະກຽມ ແລະ ເຂົ້າຮ່ວມ, ບັນທຶກກອງປະຊຸມ ຂອງຄະນະກຳມະການຄຸ້ມຄອງກອງທຶນຂັ້ນແຂວງແຕ່ລະຄັ້ງ. ກອງປະຊຸມ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກອງທຶນ ປະຈຳປີ ທົ່ວແຂວງ.
4. ເຂົ້າຮ່ວມການຕິດຕາມ ຄະນະກຳມະການ ລົງເຄື່ອນໄຫວ ແລະ ຊຸກຍູ້ວຽກງານຢູ່ແຕ່ລະກອງທຶນ.
5. ປະຕິບັດໜ້າທີ່ຕາມ ການມອບໝາຍ.

**ມາດຕາ 21 ຄະນະກຳມະການຄຸ້ມຄອງຄຸ້ມຄອງກອງທຶນຂັ້ນເມືອງ ປະກອບດ້ວຍ:**

| | | |
|---|---|---|
| 1. | ຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານກະສິກຳ ແລະ ປ່າໄມ້ | ເປັນປະທານ |
| 2. | ຫົວໜ້າ ຫ້ອງການ ກະສິກຳ ແລະ ປ່າໄມ້ | ເປັນຮອງ |
| 3. | ຮອງຫົວໜ້າຫ້ອງການການເງິນ | ເປັນກຳມະການ |
| 4. | ຮອງຫົວໜ້າຫ້ອງວ່າການເມືອງ | ເປັນກຳມະການ |
| 5. | ຮອງຫົວໜ້າຫ້ອງການແຜນການ ແລະ ການລົງທຶນ | ເປັນກຳມະການ |
| 6. | ຮອງປະທານອົງການກວດກາລັດເມືອງ | ເປັນກຳມະການ |
| 7. | ຮອງຫົວໜ້າຫ້ອງການຍຸຕິທຳເມືອງ | ເປັນກຳມະການ |
| 8. | ຮອງປະທານສະຫະພັນແມ່ຍິງເມືອງ | ເປັນກຳມະການ |
| 9. | ຮອງຫົວໜ້າຫ້ອງການ, ອົງການ ຂັ້ນເມືອງ (ທີ່ມີທຶນສະໜັບສະໜູນກອງທຶນ) | ເປັນກຳມະການ |
| 10. | ຜູ້ຕາງໜ້າທະນາຄານ ທີ່ມີຢູ່ໃນເມືອງ | ເປັນກຳມະການ |
| 11. | ຮອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ | ເປັນກຳມະການ |
| 12. | ນາຍບ້ານ ທີ່ມີກອງທຶນ | ເປັນກຳມະການ |

ມາດຕາ 22 ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງຄຸ້ມຄອງກອງທຶນ ຂັ້ນເມືອງມີດັ່ງນີ້:

1. ເປັນເສນາທິການ ໃຫ້ແກ່ເຈົ້າເມືອງ ກ່ຽວກັບວຽກງານ ຄຸ້ມຄອງ, ການຕິດຕາມການຈັດຕັ້ງປະຕິບັດວຽກງານຂອງກອງທຶນພັດທະນາຂັ້ນບ້ານ.
2. ປຸກລະດົມ, ໂຄສະນາຊວນເຊື່ອຕໍ່ທຸກພາກສ່ວນ ເພື່ອເຂົ້າມາມີສ່ວນຮ່ວມສະໜັບສະໜູນທຶນເຂົ້າໃນກອງທຶນພັດທະນາຂັ້ນບ້ານ
3. ຈັດກອງປະຊຸມສະຫຼຸບ ການຈັດຕັ້ງປະຕິບັດວຽກງານກອງທຶນ ປະຈຳປີ, ຄົ້ນຄວ້າພິຈາລະນາຮັບຮອງເອົາແຜນການເຄື່ອນໄຫວຂອງຄະນະກຳມະການ ສະເໜີຕໍ່ທ່ານເຈົ້າເມືອງ ຮັບຮອງ,
4. ລົງຕິດຕາມ, ກວດກາ, ຊຸກຍູ້, ນຳພາ ການເຄື່ອນໄຫວ ກອງທຶນພັດທະນາຂັ້ນບ້ານ ແຕ່ລະບ້ານ ທຸກໆເດືອນ.
5. ສົມທົບກັບ ອົງການປົກຄອງບ້ານແກ້ໄຂບັນຫາ ແລະ ປັບປຸງ ກອງທຶນພັດທະນາຂັ້ນບ້ານໃຫ້ມີຄວາມເຂັ້ມແຂງ.
6. ຊີ້ນຳ ແລະ ຕິດຕາມ, ກວດກາ ການປະຕິບັດວຽກງານຂອງກອງເລຂາໃນຂັ້ນຂອງຕົນ, ຄະນະບໍລິຫານກອງທຶນພັດທະນາຂັ້ນບ້ານ.
7. ພິຈາລະນາ ຮັບຮອງແຜນການນຳໃຊ້ເງິນ ບ້ວງ ພັນທະຂອງກອງທຶນພັດທະນຂັ້ນບ້ານມອບໃຫ້ເມືອງ ແລະ ອານຸມັດລາຍຈ່າຍ ແຕ່ລະຄັ້ງ,
8. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

ມາດຕາ 23 ກອງເລຂາຄະນະກຳມະການຄຸ້ມຄອງກອງທຶນຂັ້ນເມືອງ ປະກອບດ້ວຍ:

| | | |
|---|---|---|
| 1. | ຮອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ | ເປັນຫົວໜ້າ |
| 2. | ຫົວໜ້າໜ່ວຍງານພັດທະນາຊົນນະບົດ ແລະ ສະຫະກອນ | ເປັນຮອງ |
| 3. | ຫົວໜ້າໜ່ວຍງານກວດກາລັດ | ເປັນຄະນະ |
| 4. | ຜູ້ຮັບຜິດຊອບວຽກງານສະຫະກອນ | ເປັນຄະນະ |
| 5. | ຜູ້ຮັບຜິດຊອບວຽກງານກອງທຶນ | ເປັນຄະນະ, ເປັນຜູ້ສັງລວມວຽກ |

ມາດຕາ 24 ໜ້າທີ່ ແລະ ສິດຂອງກອງເລຂາ.

1. ສັງລວມ ສະພາບການ ຈັດຕັ້ງປະຕິບັດ ວຽກງານ ກອງທຶນພັດທະນາຂັ້ນບ້ານ ໃນຂອບເຂດທົ່ວເມືອງ ລາຍງານ ໃຫ້ຄະນະກຳມະການ ຄຸ້ມຄອງຂັ້ນເມືອງ ໃນແຕ່ລະເດືອນ, ຮ່າງເອກະສານບົດລາຍງານ, ແຜນການ, ແຜນເຄື່ອນໄຫວ ໃຫ້ຄະນະກຳມະການ ຄຸ້ມຄອງ ກອງທຶນຂັ້ນເມືອງ.
2. ເປັນໃຈກາງໃນການປະສານງານ ຂອງບັນດາ ທ່ານ ຄະນະກຳມະການຄຸ້ມຄອງກອງທຶນ.
3. ກະກຽມ ແລະ ເຂົ້າຮ່ວມ, ບັນທຶກກອງປະຊຸມ ຂອງຄະນະກຳມະການຄຸ້ມຄອງກອງທຶນຂັ້ນເມືອງແຕ່ລະຄັ້ງ, ກອງປະຊຸມ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກອງທຶນ ປະຈຳປີ ທົ່ວເມືອງ,
4. ປະຕິບັດໜ້າທີ່ຕາມວຽກງານວິຊາສະເພາະຂອງຕົນ
5. ເຂົ້າຮ່ວມການຕິດຕາມຄະນະຊີ້ນຳ ລົງເຄື່ອນໄຫວ ແລະ ຊຸກຍູ້ວຽກງານຢູ່ແຕ່ລະກອງທຶນ.
6. ຄຸ້ມຄອງ ແລະ ສະເໜີ ແຜນລາຍຈ່າຍງົບປະມານ ບ້ວງ ຕິດຕາມ, ບ້ວງ ດຳເນີນກອງປະຊຸມ, ບ້ວງຝຶກອົບຮົມ ຕໍ່ຄະນະຊີ້ນຳ.
7. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

ມາດຕາ 25 ຄະນະບໍລິຫານ, ຄະນະກວດກາກອງທຶນພັດທະນາຂັ້ນບ້ານ ຊຶ່ງໄດ້ຮັບການເລືອກຕັ້ງຈາກກອງປະຊຸມໃຫຍ່ຂອງສະມາຊິກກອງທຶນ 2 ປີໃດເທື່ອໜຶ່ງ ປະກອບດ້ວຍ:

1. ຄະນະບໍລິຫານກອງທຶນພັດທະນາຂັ້ນບ້ານ ບ້ານໜຶ່ງ ຕ້ອງມີຄະນະແຕ່ 7 ທ່ານຂຶ້ນໄປ, ໂດຍແມ່ນ ຮອງນາຍບ້ານເປັນປະທານ ແລະ ປະກອບດ້ວຍ ບຸກຄົນໃນການຈັດຕັ້ງບ້ານ, ບຸກຄົນຢູ່ພາຍໃນບ້ານ ເປັນຄະນະຮັບຜິດຊອບແຕ່ລະບັນຊີ, ບຸກຄົນທີ່ຈະປະກອບເຂົ້າໃນຄະນະ ໂດຍສະເພາະຜູ້ເຮັດວຽກ ບັນຊີ ເງິນຝາກອອມ, ບັນຊີເງິນກູ້, ບັນຊີເງິນສົດ ຕ້ອງເລັ່ງໃສ່ ຜູ້ມີປະສົບການ, ຜູ້ທີ່ໜຸ່ມນ້ອຍ ທີ່ຮຽນຈົບວິຊາສະເພາະໃດໜຶ່ງ ຫຼື ຈົບຊັ້ນມັດທະຍົມຕົ້ນຂຶ້ນໄປ ຊຶ່ງມີຄວາມສາມາດໃນການຈົດກ່າຍ, ຄິດໄລ່ບັນຊີໄດ້ດີ ຫຼື ສາມາດຮູ້ນຳໃຊ້ຄອມພິວເຕີຫຍິ່ງເປັນການດີ.
2. ຄະນະກວດກາກອງທຶນພັດທະນາຂັ້ນບ້ານຕ້ອງມີຄະນະ ແຕ່ 5 ຄົນຂຶ້ນໄປ ໂດຍແມ່ນນາຍບ້ານເປັນປະທານ, ປະກອບດ້ວຍບຸກຄົນໃນການຈັດຕັ້ງບ້ານ, ຜູ້ຊົງຄຸນວຸດທິ ຫຼື ພະນັກງານ ທີ່ດຳລົງຊີວິດຢູ່ໃນບ້ານ ປະກອບເຂົ້າເປັນຄະນະ.

**ມາດຕາ 26 ໜ້າທີ່ ແລະ ຂອບເຂດສິດ ຂອງຄະນະບໍລິຫານ, ຄະນະກວດກາ ກອງທຶນພັດທະນາຂັ້ນບ້ານ.**

ກ. ໜ້າທີ່ ແລະ ສິດ ຄະນະບໍລິຫານງານ:

1. ຮັບສະໝັກສະມາຊິກ.
2. ຮັບຜິດຊອບກ່ຽວກັບບັນຊີການເງິນ.
3. ປະຕິບັດຕາມກົດລະບຽບ ແລະ ມະຕິກອງປະຊຸມໃຫຍ່ຂອງຄະນະ.
4. ເປັນຕົວແທນຮອບດ້ານໃຫ້ແກ່ສະມາຊິກ ຂອງກອງທຶນ.
5. ກວດກາການສະສົມເງິນຝາກ.
6. ສ້າງແຜນການ ສະຫຼູບການເຄື່ອນໄຫວປະຈຳປີ ລາຍງານຕໍ່ກອງປະຊຸມໃຫຍ່.
7. ພິຈາລະນາເງິນກູ້ໃຫ້ສະມາຊິກ.
8. ກວດກາການແບ່ງປັນກຳໄລສຸດທິໝົດປີ.
9. ເກັບມ້ຽນເອກະສານຕ່າງໆ.
10. ຮັບຜິດຊອບກ່ຽວກັບການຈັດຕັ້ງກອງປະຊຸມ.
11. ຄົ້ນຄວ້າ ແລະ ກຳນົດການແບ່ງເງິນປັນຜົນຮ່ວງ 13% ທີ່ໄດ້ກຳນົດໄວ້ ໃຫ້ຄະນະບໍລິຫານແຕ່ລະທ່ານ.
12. ຄະນະຮັບຜິດຊອບກອງທຶນ, ຄະນະກວດກາກອງທຶນ ຈະໄດ້ຮັບເງິນອຸດໜູນພາຍຫຼັງທີ່ກອງທຶນໄດ້ມີການສະຫຼູບແບ່ງປັນຜົນແຕ່ລະໄລຍະຕາມ ເປີເຊັນທີ່ກຳນົດໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

**ຂ. ໜ້າທີ່ ແລະ ສິດ ຂອງຄະນະກວດກາ.**

1. ຄະນະກວດກາກອງທຶນ ມີໜ້າທີ່ ຕິດຕາມ ແລະ ປະເມີນຜົນການດຳເນີນງານຂອງຄະນະບໍລິຫານກອງທຶນ, ພ້ອມທັງມີສິດສະເໜີໃຫ້ມີກອງປະຊຸມໃຫຍ່ວິສາມັນຂອງກອງທຶນຖ້າຫາກມີຄວາມຈຳເປັນ
2. ກວດກາ, ຕິດຕາມການນຳໃຊ້ເງິນ ທີ່ສະມາຊິກກູ້ຢືມໄປ ມີການນຳໃຊ້ຖືກຕ້ອງຕາມເປົ້າໝາຍ ຫຼື ບໍ່ ເພີ່ມແນະນຳ, ກ່າວເຕືອນ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 27 ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຄະນະຄຸ້ມຄອງກອງທຶນ ແຕ່ລະຂັ້ນ.**

1. ມີພຶດຕິກຳ ຕ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນພັດທະນາຂັ້ນບ້ານ.
2. ມີພຶດຕິກຳອື່ນທີ່ສ້າງຄວາມເສຍຫາຍ ແລະ ເຊື່ອມເສຍຕໍ່ ກອງທຶນພັດທະນາຂັ້ນບ້ານ.
3. ປ່ອຍປະລະເລີຍການປະຕິບັດໜ້າທີ່ຂອງຕົນກ່ຽວກັບວຽກງານກອງທຶນ.
4. ສວຍໃຊ້ອຳນາດໜ້າທີ່ຕຳແໜ່ງໂດຍບໍ່ຖືກຕ້ອງຕໍ່ວຽກງານກອງທຶນ.

**ມາດຕາ 28 ສຳລັບ ຄະນະບໍລິຫານກອງທຶນ.**

1. ມີພຶດຕິກຳ ຕ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນພັດທະນາຂັ້ນບ້ານ.
2. ປ່ອຍປະລະເລີຍການປະຕິບັດໜ້າທີ່ຂອງຕົນຕາມລຳພັງໃຈ.
3. ປອມແປງ ເອກະສານທີ່ກ່ຽວຂ້ອງກັບວຽກງານກອງທຶນ.
4. ສວຍໃຊ້ອຳນາດໜ້າທີຕຳແໜ່ງໂດຍບໍ່ຖືກຕ້ອງຕໍ່ລະບຽບຂອງກອງທຶນ.
5. ເປັນຜູ້ລົງລາຍເຊັນຄ້ຳປະກັນການກູ້ຢືມໃຫ້ສະມາຊິກ.
6. ຂາດການເຂົ້າຮ່ວມກອງປະຊຸມຂອງຄະນະບໍລິຫານກອງທຶນ.

## ໝວດທີ 7
## ນະໂຍບາຍ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29 ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນ, ຄະນະບໍລິຫານກອງທຶນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທຸກພາກສ່ວນ ທີມີຜົນງານດີເດັ່ນ ໃນການປະກອບສ່ວນຊຸກຍູ້ສົ່ງເສີມ ເຮັດໃຫ້ກອງທຶນມີການເຕີບໃຫຍ່ຂະຫຍາຍຕົວ, ເຂັ້ມແຂງ ແລະ ຍືນຍົງ ຈະໄດ້ຮັບການຍ້ອງຍໍສັນລະເສີນ ດ້ວຍຮູບການຕ່າງໆຕາມຄວາມເໝາະສົມ.

**ມາດຕາ 30 ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດທີມີສ່ວນກ່ຽວພັນ ກໍ່ໃຫ້ເກີດມີຜົນເສຍຫາຍ ຕໍ່ກອງທຶນພັດທະນາຂັ້ນບ້ານ ແລະ ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກໃສ່ມາດຕະການຕາມກໍລະນີ ເບົາ ຫຼື ໜັກ ຕາມລະບຽບກົດໝາຍຂອງ ສປປ ລາວ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 31 ການຈັດຕັ້ງປະຕິບັດ**

ຄະນະກຳມະການຄຸ້ມຄອງກອງທຶນ ຂັ້ນແຂວງ, ຂັ້ນເມືອງ, ເປັນເຈົ້າການ ຕິດຕາມ, ຊຸກຍູ້ ຄະນະບໍລິຫານກອງທຶນພັດທະນາຂັ້ນບ້ານ ແລະ ຜັນຂະຫຍາຍສ້າງເປັນກົດລະບຽບກອງທຶນຂອງຕົນ, ພ້ອມທັງປະຕິບັດຕາມ ໜ້າທີ່ ແລະ ສິດ ຂອງຕົນ, ມອບໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ເປັນເຈົ້າການ, ເປັນໃຈກາງ ປະສານງານ ໃນການຈັດຕັ້ງປະຕິບັດຕົວຈິງ.

**ມາດຕາ 32 ຜົນສັກສິດ**

ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ເຈົ້າແຂວງ

ພົງສະຫວັນ ສິດທະວົງ